ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 03 /ທກ

ນະຄອນຫຼວງວຽງຈັນ, ວັນທີ: 19 ມັງກອນ 2016

ສຳນັກງານ ຄຄຊ
ເລກທີ 0051
ວັນທີ 19 JAN 2016
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 28/12/2015 ຫາ 01/01/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ຍ້ອນຕົວເລກທາງດ້ານເສດຖະກິດຂອງ ສ. ອາເມລິກາ ອອກມາບໍ່ດີເປັນຕົ້ນ: ການຂະຫຍາຍຕົວຂອງເສດຖະກິດໃນໄຕມາດ 3/2015 ຫຼຸດລົງ ເປັນ 2% ຈາກ 3,9% ໃນໄຕມາດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 22/12/2015 | ອາທິດນີ້ 29/12/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0867 | 1,0976 | -1,00% |
| ໂດລາ/ເຢນ | 121,29 | 120,33 | 0,80% |
| ໂດລາ/ບາດ | 36,13 | 36,10 | 0,08% |
| ໂດລາ/ເປໂຊ | 47,29 | 47,10 | 0,41% |
| ໂດລາ/ຣູເປຍ | 13.792,22 | 13.694,44 | 0,71% |
| ໂດລາ/ໂດລາສິງກະໂປ | 1,4113 | 1,4096 | 0,12% |
| ໂດລາ/ຢວນ | 6,4795 | 6,4853 | -0,09% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 5,83% ຈາກ 35,76 ໂດລາ/ບາເຣວ ມາເປັນ 37,84 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງສະຫະລັດເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບສະຫະລັດຫຼຸດລົງ 5,9 ລ້ານບາເຣວ ເປັນ 484,8 ລ້ານບາເຣວ ໃນອາທິດສິ້ນສຸດວັນທີ 18 ທັນວາ 2015.

ລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,30% ຈາກ 1.068,77 ໂດລາ/ອອນ ມາເປັນ 1.072,03 ໂດລາ/ອອນ ຍ້ອນນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ ແລະ ປ້ອງກັນຄວາມສ່ຽງ ບວກກັບການອ່ອນຄ່າລົງຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,08% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,10% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,08% ສຳລັບອັດຕາ ທທກ ແຕ່ອ່ອນຄ່າລົງ 0,05% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,78% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,97% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 9,01% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 10,45% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 22/12/2015 | | | ອາທິດນີ້ 29/12/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.141,52 | 8.168,48 | 8.147,71 | 8.134,27 | 8.163,45 | 8.141,32 | 0,09% | 0,06% | 0,08% |
| ບາດ | 226,08 | 227,58 | 227,47 | 225,93 | 227,57 | 227,30 | 0,07% | 0,002% | 0,08% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.160,73 | 8.237,33 | 8.199,03 | 8.149,13 | 8.232,00 | 8.190,57 | 0,14% | 0,06% | 0,10% |
| ບາດ | 227,13 | 228,20 | 227,66 | 227,31 | 228,27 | 227,79 | -0,08% | -0,03% | -0,05% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,24% | 0,84% | 0,63% | 0,18% | 0,84% | 0,60% | | | |
| ບາດ | 0,46% | 0,27% | 0,08% | 0,61% | 0,30% | 0,22% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 1,45% ທຽບໃສ່ວັນທີ 25/12/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 22,61%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,67% ເມື່ອທຽບໃສ່ວັນທີ 25/12/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 15,83%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 28/12/2015) ເຫັນວ່າ ທທກ ຊື້ໂດລາສຸດທິ 29,48 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 81,57 ລ້ານໂດລາ ແລະ ຂາຍໂດລາໄດ້ 52,08 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 2.217,79 ລ້ານບາດ (ໃນນີ້ ຊື້ບາດໄດ້ 353,68 ລ້ານບາດ ແລະ

---

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ຂາຍບາດໄດ້ 2.571,47 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ຫຼຸດລົງ 37,14% ແລະ ຫຼຸດລົງ 26,85% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 4,54 ລ້ານໂດລາ ແລະ ເງິນບາດມີຈໍານວນ 73,74 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 6,41 ລ້ານໂດລາ ແລະ ຊື້ບາດສຸດທິ ຈໍານວນ 15,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈໍານວນ 67,89 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈໍານວນ 3.978,44 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 22/12/2015 | | ອາທິດທີ 28/12/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 35,24 | 140,40 | 15,91 | 135,56 | -54,86% | -3,45% |
| - ທ/ຄທຸລະກິດອື່ນໆ | 104,91 | 418,34 | 65,66 | 218,12 | -37,41% | -47,86% |
| ລວມຊື້: | **140,15** | **558,74** | **81,57** | **353,68** | **-41,80%** | **-36,70%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 18,33 | 154,00 | 20,80 | 203,27 | 13,52% | 31,99% |
| - ທ/ຄທຸລະກິດອື່ນໆ | 54,14 | 3.286,06 | 31,28 | 2.368,20 | -42,22% | -27,93% |
| ລວມຂາຍ: | **72,47** | **3.440,06** | **52,08** | **2.571,47** | **-28,13%** | **-25,25%** |
| ຊື້-ຂາຍສຸດທິ ທທກ | **67,68** | **-2.881,31** | **29,48** | **-2.217,79** | **-56,44%** | **-23,03%** |
| ຜິດດ່ຽງ ຊື້-ຂາຍ | 48,29 | -515,68 | 36,15 | -627,06 | -121,64% | -111,95% |
| ມູນຄ່າການຊື້-ຂາຍ | **212,62** | **3.998,80** | **133,65** | **2.925,15** | **-37,14%** | **-26,85%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 12,50 | 21,00 | 37,00 | 15,00 | | |
| - ທຫລ ຂາຍໃຫ້ ທທກ | 32,15 | 0,00 | 43,41 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-19,65** | **21,00** | **-6,41** | **15,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **11,17** | **10,00** | **4,54** | **73,74** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,05 | 6.250,00 | 197,34 | 3.978,44 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 87,79 | 0,00 | 129,46 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-87,74** | **6.250,00** | **67,89** | **3.978,44** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈໍາເດືອນ 12/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,21% ຫຼຸດລົງ 0,06% ຈາກ 1,27% ໃນເດືອນ 11/2015 ຍ້ອນລາຄາອາຫານຄາດວ່າຈະມີທ່າອ່ຽງຫຼຸດລົງ ໂດຍສະເພາະແມ່ນລາຄາເຂົ້າສານ ບວກກັບລາຄານໍ້າມັນ ແລະ ຄ່າໂດຍສານທີ່ຈະແຈ້ງປັບຫຼຸດລົງ.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 433,63 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 192,8% ທຽບໃສ່ອາທິດຜ່ານມາ.

2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.098 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 36,22% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 899,06 ຕື້ກີບ ເພີ່ມຂຶ້ນ 25,24% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (25-31/12/2015) ມີຈຳນວນ 1.703 ຄັ້ງ ໂດຍມີມູນຄ່າ 581,97 ຕື້ກີບ ເພີ່ມຂຶ້ນ 22,38% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 431 ຄັ້ງ.

2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.173,63 ຈຸດ ເພີ່ມຂຶ້ນ 5,42% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 92.479 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 478,43 ລ້ານກີບ ຫຼຸດລົງ 58,66% ທຽບໃສ່ອາທິດຜ່ານມາ ເນື່ອງຈາກອາທິດນີ້ ຕະຫຼາດຫຼັກຊັບລາວ ດຳເນີນການຊື້-ຂາຍພຽງແຕ່ 2 ວັນເທົ່ານັ້ນ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 37,17% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.918 ກີບ/ຮຸ້ນ ຫຼຸດລົງ 170 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 8.525 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 41,92 ລ້ານກີບ ຫຼຸດລົງ 87,91% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 48,93% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,75%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.596 ກີບ/ຮຸ້ນ ຫຼຸດລົງ 107 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 71.388 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 399,5 ລ້ານກີບ ຫຼຸດລົງ 4,34% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 36,32% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ອາທິດນີ້ບໍ່ມີລາຄາຊື້-ຂາຍສະເລ່ຍ ເນື່ອງຈາກບໍ່ສາມາດຈັບຄູ່ຊື້-ຂາຍ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.942 ກີບ/ຮຸ້ນ ເພີ່ມຂຶ້ນ 225 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 12.466 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 36,66 ລ້ານກີບ ຫຼຸດລົງ 38,45%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 28,29% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,68%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.300 ກີບ/ຮຸ້ນ ເພີ່ມຂຶ້ນ 4 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,33 ລ້ານກີບ ຫຼຸດລົງ 99,83%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,10%[6].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

[6] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການສະໜອງຂໍ້ມູນການເຄື່ອນໄຫວບັນຊີເງິນຝາກຂອງລູກຄ້າ ຢູ່ນຳທະນາຄານທຸລະກິດ ໃຫ້ແກ່ກົມສືບສ່ວນ-ສອບສວນ ຕ້ານການສໍ້ລາດບັງຫຼວງ;
- ສຳເລັດການຈັດກອງປະຊຸມປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດຄຳແນະນຳວ່າດ້ວຍການແຈ້ງເງິນສົດ, ວັດຖຸມີຄ່າ ແລະ ເຄື່ອງມືທາງດ້ານການເງິນ ໃນເວລາເຂົ້າ-ອອກ ສປປ ລາວ ຮ່ວມກັບກົມພາສີ, ກະຊວງການເງິນ ແລະ ກົມນະໂຍບາຍເງິນຕາ ທຫລ ທີ່ ທຫລ;
- ສຳເລັດການຮ່າງຂໍ້ຕົກລົງວ່າດ້ວຍ ການຮັບຮອງເອົາລາຍຊື່ຂອງຜູ້ກໍ່ການຮ້າຍສາກົນ ຕາມຍັດຕິ S/RES/1267 ປີ 1999 ຂອງສະພາຄວາມໝັ້ນຄົງ ອົງການ ສປຊ ແລະ ຮ່າງແຈ້ງການຂອງ ຄຕຟງ ກ່ຽວກັບລາຍຊື່ຂອງຜູ້ກໍ່ການຮ້າຍສາກົນ ຕາມຍັດຕິ S/RES/1267 ປີ 1999 ຂອງສະພາຄວາມໝັ້ນຄົງ ອົງການ ສປຊ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າ: ❶ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❷ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ, ❸ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❹ຄົ້ນຄວ້າການແຍກສູນຮັບຝາກຫຼັກຊັບ ອອກຈາກຕະຫຼາດຫຼັກຊັບລາວ;
- ສືບຕໍ່ຈັດຕັ້ງຜັນຂະຫຍາຍພົວພັນຮ່ວມມືກັບບັນດາສະຖາບັນການສຶກສາທີ່ໄດ້ເຊັນ MOU;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງລັດຖະບານ ທຫລ ປະຈຳປີ 2015 ທີ່ ທຫລ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພົມມະກອນ